ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ PWT

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ກົມຂົນສົ່ງ

ເລກທີ 04071 /ຍທຂ.ກຂສ

ນະຄອນຫລວງວຽງຈັນ,ວັນທີ 02 MAR 2016

**ຮຽນ** : ທ່ານຫົວໜ້າຫ້ອງການ ກະຊວງ ໂຍທາທິການ ແລະ ຂົນສົ່ງ

**ເລື່ອງ** : ກ່ຽວກັບຄຳຖາມ ທີ່ປະຊາຊົນ ສົນໃຈເລື່ອງການຂົນສົ່ງ

- ອີງຕາມໃບສະເໜີ ຂອງຫ້ອງການ ກະຊວງ ຍທຂ ກ່ຽວກັບຄຳຖາມທີ່ປະຊາຊົນສົນໃຈກ່ຽວກັບວຽກງານຂົນສົ່ງສະບັບເລກທີ 01075/ຍທຂ.ຫກ, ລົງວັນທີ 20.1.2016

ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະ ຂົນສົ່ງ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບກ່ຽວກັບຄຳຖາມທີ່ປະຊາຊົນສົນໃຈ ດັ່ງນີ້:

1. ແຈ້ງການປັບລາຄາຂົນສົ່ງໂດຍສານປະຈຳທາງ, ກົມຂົນສົ່ງ ໄດ້ມີບົດລາຍງານໃຫ້ ຫ້ອງການ ກະຊວງ ສະບັບເລກທີ 1673 /ຍທຂ.ກຂສ, ລົງວັນທີ29/ 01/2016, ກ່ຽວກັບການຈັດຕັ້ງປະຕິບັດ ການຫລຸດລາຄາຂົນສົ່ງໂດຍສານ 5-10% ຊຶ່ງບັນຫາດັ່ງກ່າວນີ້ ກົມຂົນສົ່ງໄດ້ສະເໜີຜ່ານກອງປະຊຸມຄະນະນຳກະຊວງໃນວັນທີ 5/2/ 2016, ປະຈຸບັນຢູ່ໃນຂັ້ນຕອນ ຮ່າງເປັນແຈ້ງການ ຂອງ ຫ້ອງການ ກະຊວງ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດໄດ້ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.
2. ນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາທ່ອງທ່ຽວຢູ່ ສປປ ລາວ ສາມາດເຊົ່າລົດພ້ອມຜູ້ຂັບຂີ່ໄດ້, ຖ້ານັກທ່ອງທ່ຽວຫາກມີໃບຂັບຂີ່ສາກົນ ຫລື ມີໃບຂັບຂີ່ຂອງປະເທດອາຊຽນ ກໍ່ສາມາດເຊົ່າລົດຂັບຂີ່ທ່ອງທ່ຽວດ້ວຍຕົນເອງໄດ້ ໃບຂັບຂີ່ຕ້ອງຖືກຕາມປະເພດລົດທີ່ເຊົ່າຂັບນັ້ນ, ສຳລັບລົດຈັກສອງລໍ້ ແລະ ລົດຖີບ ສາມາດເຊົ່າຂັບຂີ່ດ້ວຍຕົນເອງໄດ້ສະເພາະຂີ່ທ່ຽວຊົມຢູ່ສະຖານທີ່ທ່ອງທ່ຽວ, ໃນຕົວເມືອງທ່ອງທ່ຽວເທົ່ານັ້ນ, ລົດທີ່ໃຫ້ເຊົ່າທຸກປະເພດກໍ່ຕ້ອງເປັນລົດຂອງວິສາຫະກິດໃຫ້ເຊົ່າລົດມີເອກະສານລົດຖືກຕ້ອງຄົບຖ້ວນ ແລະ ມີການປະກັນໄພ ຕາມກົດໝາຍ ແລະ ລະບຽບການປະກັນໄພ.
3. ຕາມກົດໝາຍຈະລາຈອນທາງບົກ ຂອງ ສປປ ລາວ ແລ້ວບໍ່ອະນຸຍາດໃຫ້ລົດຈັກທີ່ມີຄວາມແຮງເກີນ 250 cc ເຂົ້າມາແລ່ນຢູ່ດິນແດນຂອງ ສປປ ລາວ, ສັນຍາ ແລະ ອະນຸສັນຍາຂົນສົ່ງທາງບົກສອງຝ່າຍ ແລະ ຫລາຍຝ່າຍທີ່ລາວເຮົາເປັນພາຄີແມ່ນບໍ່ໄດ້ຄອບຄຸມເຖິງລົດຈັກສອງລໍ້, ສາມລໍ້ ແລະ ບໍ່ອະນຸຍາດໃຫ້ເຂົ້າ-ອອກຜ່ານດ່ານຊາຍແດນຂອງສອງປະເທດໄດ້, ຫາກນັກທ່ອງທ່ຽວຕ່າງປະເທດຕ້ອງການຂັບຂີ່ລົດຈັກຄວາມແຮງບໍ່ເກີນ 250 cc ຈາກຫວຽດນາມເຂົ້າມາລາວແລ້ວອອກຄືນຫວຽດນາມນັ້ນຖ້າໄດ້ຮັບການຄໍ້າປະກັນຈາກອົງການທ່ອງແທ່ງຊາດກ່ອນ ທີ່ເປັນການທ່ອງທ່ຽວແບບຄາລາວານກໍ່ສາມາດມາຂໍອະນຸຍາດນຳກົມຂົນສົ່ງ ກະຊວງ ຍທຂໄດ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

ຫົວໜ້າກົມ

ກະຊວງໂຍທາທິການ ແລະ ຂົນສົ່ງ ກົມຂົນສົ່ງ

ດຣ. ບຸນຕາ ອ່ອນນາວົງ